ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກອງຈະລາຈອນທາງອາກາດລາວ

ເລກທີ 2912/ກຈລ

ນະຄອນຫລວງວຽງຈັນ, ວັນທີ 15 ກັນຍາ 2026

# ໜັງສືແຈ້ງເຊີນປະມູນ

1. ກອງຈະລາຈອນທາງອາກາດລາວ ກະຊວງໂຍທາທິການ ແລະ ຂົນສົ່ງ. ໄດ້ຮັບງົບປະມານປະຈໍາປີ 2026. ສໍາລັບການປະມູນ-ຈັດຊື້ເຄື່ອງໃຊ້ຫ້ອງການ ປະຈໍາປີ 2026 ຈຶ່ງຂໍເຊີນບັນດາບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ, ກໍານົດເວລາໃນການມອບ-ຮັບ ແມ່ນພາຍໃນ 30 ວັນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນ ທີ່ໄດກໍານົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຮ່ວມແຂ່ງຂັນປະມູນ ສາມາດຕິດຕໍ່ພົວພັນເອົາເອກະສານປະມູນໄດ້ທີ່ ກອງຈະລາຈອນທາງອາກາດລາວ ກະຊວງໂຍທາທິການ ແລະ ຂົນສົ່ງ, ເບີໂທລະສັບຕິດຕໍ່ 021 520776, 020 55342660, 020 5411242 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍນັບແຕ່ວັນທີແຈ້ງເຊີນເປັນຕົ້ນໄປໃນລາຄາ 2.000.000 ກີບ/ຊອງ. ວິທີການຊໍາລະເປັນເງິນສົດ ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນໍາໃຊ້ເຂົ້າໃນວຽກງານການປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09.00 ໂມງ ຂອງວັນທີ່ 21 ຕຸລາ 2026. ຊອງປະມູນທຸກໆຊອງຈະໄດ້ເປີດເວລາ 09.00 ໂມງ ຂອງວັນທີ່ 21 ຕຸລາ 2026 ຢູ່ຫ້ອງປະຊຸມ ກອງຈະລາຈອນທາງອາກາດລາວໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນເຂົ້າຮ່ວມແຂ່ງຂັນ ທີ່ຫ້ອງປະຊຸມຂອງກອງຈະລາຈອນທາງອາກາດລາວ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຖືກຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ;
6. ຊອງປະມູນຕ້ອງຄໍ້າປະກັນດ້ວຍແຊັກ (ວີຊ່າ) ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ ຊຶ່ງມີມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນດັ່ງກ່າວຕາມທາງຄວນດ້ວຍ

ຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງຈະລາຈອນທາງອາກາດລາວ

ອໍາດູນລາ ສາລີນທອນ